ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ເພີ່ມຄວາມຮູ້ທາງດ້ານກົດໝາຍຂະແໜງທະນາຄານ ໃຫ້ແກ່ທະນາຄານທຸລະກິດ



ໃນວັນທີ 9 ແລະ 16 ສິງຫາ 2019 ທີ່ຜ່ານມາ; ກົມນິຕິກຳ ຮ່ວມກັບ ກົມຄຸ້ມຄອງລະບົບຊຳລະສະສາງ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ເຜີຍແຜ່ກົດໝາຍທີ່ປັບປຸງ ແລະ ສ້າງຂຶ້ນໃໝ່ຂອງ ທຫລ ໃຫ້ແກ່ພະນັກງານທະນາຄານນະໂຍບາຍ ແລະ ທະນາຄານຮ່ວມທຸລະກິດ ລາວ-ຫວຽດ ທີ່ສຳນັກງານໃຫຍ່ຂອງສອງທະນາຄານ ໂດຍມີທ່ານ ປອ. ເວີນສະຫວັນ ສີວິໄຊ ຮອງຫົວໜ້າກົມນິຕິກຳ, ຄະນະອຳນວຍການ ແລະ ມີພະນັກງານຂອງສອງທະນາຄານ ເຂົ້າຮ່ວມ.

ການເຜີຍແຜ່ໃນຄັ້ງນີ້ປະກອບມີ: ກົດໝາຍວ່າດ້ວຍ ທຫລ (ສະບັບປັບປຸງ), ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍລະບົບການຊຳລະ ຊຶ່ງໄດ້ນຳເອົາເນື້ອໃນສຳຄັນໃນບັນດາມາດຂອງທັງສາມກົດໝາຍ ມາເຜີຍແຜ່ ທັງນີ້ກໍ່ເພື່ອໃຫ້ພະນັກງານນຳໄປຈັດຕັ້ງປະຕິບັດໃຫ້ມີຄວາມຖືກຕ້ອງ, ສອດຄ່ອງ ແລະ ເປັນເອກະພາບກັນ.

ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມ ກໍໄດ້ມີການແລກປ່ຽນ, ສົນທະນາບາງບັນຫາເພື່ອເປັນບ່ອນອີງໃນການນຳໄປຈັດຕັ້ງປະຕິບັດຕົວຈິງໃຫ້ເກີດດອກອອກຜົນ ແລະ ເປັນອັນດຽວກັນ.






# ຂ່າວ: ນ. ຄຳເບົ້າ ສຸວໍລະວົງ.

# ພາບ: ນ. ພອນສະນິດ ພິຈິດ.

ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ